ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ | ເລກທີ 0023 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 06 ມັງກອນ 2022

# ຂໍ້ຕົກລົງ
# ວ່າດ້ວຍ ການແບ່ງຂັ້ນຄຸ້ມຄອງທຸລະກິດຍານພາຫະນະທາງບົກ

- ອີງຕາມ ດຳລັດ ວ່າດ້ວຍການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ສະບັບເລກທີ 470/ລບ, ລົງວັນທີ 27 ທັນວາ 2019;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງ ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0047/ຫອຄ.ນກ ລົງວັນທີ 06 ມັງກອນ 2022

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ຜັນຂະຫຍາຍ ຂໍ້ 7 ມາດຕາ 45 ຂອງ ດຳລັດວ່າດ້ວຍການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ສະບັບເລກທີ 470/ລບ, ລົງວັນທີ 27 ທັນວາ 2019 ໂດຍກຳນົດ ກ່ຽວກັບການແບ່ງສິດ ແລະ ໜ້າທີ່ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ໃນການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ເພື່ອເຮັດໃຫ້ທຸລະກິດຍານພາຫະນະທາງບົກ ແລະ ຜູ້ຈັດຕັ້ງປະຕິບັດວຽກງານຕົວຈິງມີຄວາມເຂົ້າໃຈ ກ່ຽວກັບພາລະບົດບາດຂອງແຕ່ລະຂັ້ນຄຸ້ມຄອງ ແນໃສ່ອຳນວຍຄວາມສະດວກແກ່ການສ້າງຕັ້ງ ແລະ ດຳເນີນທຸລະກິດຍານພາຫະນະທາງບົກ.

**ມາດຕາ 2 ການແບ່ງຂັ້ນຄຸ້ມຄອງທຸລະກິດຍານພາຫະນະທາງບົກ**

ການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ແບ່ງອອກເປັນ ສາມ ຂັ້ນ ດັ່ງນີ້:

1. **ຂັ້ນສູນກາງ** ປະກອບມີ ກົມການນຳເຂົ້າ ແລະ ສົ່ງອອກ, ກົມການຄ້າພາຍໃນ ແລະ ກົມອຸດສາຫະກຳ ແລະ ຫັດຖະກຳ ໂດຍແບ່ງຄວາມຮັບຜິດຊອບຄຸ້ມຄອງຕາມປະເພດທຸລະກິດຍານພາຫະນະທາງບົກ ດັ່ງນີ້:
   - 1.1 **ກົມການນຳເຂົ້າ ແລະ ສົ່ງອອກ** ເປັນຜູ້ຮັບຜິດຊອບ ທັງເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຄຸ້ມຄອງທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ;
   - 1.2 **ກົມການຄ້າພາຍໃນ** ເປັນຜູ້ຮັບຜິດຊອບ ທັງເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຄຸ້ມຄອງທຸລະກິດການຈຳໜ່າຍຍານພາຫະນະທາງບົກ;

1.3 **ກົມອຸດສາຫະກຳ ແລະ ຫັດຖະກຳ** ເປັນຜູ້ຮັບຜິດຊອບ ທັງເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຄຸ້ມຄອງທຸລະກິດໂຮງງານຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກ.

2. **ຂັ້ນແຂວງ** ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເປັນຜູ້ຮັບຜິດຊອບ ທັງເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ຕາມພາລະບົດບາດຂອງຕົນ ໃນຂອບເຂດ ແຂວງ, ນະຄອນຫຼວງວຽງຈັນ.

3. **ຂັ້ນເມືອງ** ແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເປັນຜູ້ຮັບຜິດຊອບ ທັງເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ຕາມພາລະບົດບາດຂອງຕົນ ໃນຂອບເຂດ ເມືອງ, ນະຄອນ.

### ມາດຕາ 3 ສິດ ແລະ ໜ້າທີ່ ຂອງກົມການນຳເຂົ້າ ແລະ ສົ່ງອອກ

ກົມການນຳເຂົ້າ ແລະ ສົ່ງອອກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ນິຕິກຳ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງຫົວໜ່ວຍທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ນິຕິກຳ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ໃຫ້ພາກສ່ວນທີ່ກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ ຢູ່ສູນກາງ ແລະ ທ້ອງຖິ່ນ ຊາບຢ່າງທົ່ວເຖິງ;

3. ພິຈາລະນາການອອກ, ສັ່ງໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ປະເພດ ສີ່ ລໍ້ຂຶ້ນໄປ (ລວມທັງປະເພດ ສອງ ຫຼື ສາມ ລໍ້ ທີ່ຂຶ້ນກັບບໍລິສັດນຳເຂົ້າ ແລະ ສົ່ງອອກຍານພາຫະນະທີ່ມີ ສີ່ ລໍ້ຂຶ້ນໄປ) ໃນຂອບເຂດທົ່ວປະເທດ;

4. ພິຈາລະນາການຂໍອະນຸຍາດນຳເຂົ້າ, ສົ່ງອອກ, ນຳເຂົ້າເພື່ອສົ່ງອອກຕໍ່ຍານພາຫະນະທາງບົກ ແລ້ວແຈ້ງໃຫ້ຂະແໜງການເງິນຮັບຊາບ;

5. ປະສານສົມທົບກັບຂະແໜງການກ່ຽວຂ້ອງຄົ້ນຄວ້າ ແລະ ລາຍງານລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອນຳສະເໜີລັດຖະບານພິຈາລະນາກຳນົດ ແລະ ດັດສົມຫົວໜ່ວຍທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ໃຫ້ເໝາະສົມຕາມສະພາບການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

6. ຮັບ, ພິຈາລະນາແກ້ໄຂ ຫຼື ນຳສະເໜີຂັ້ນເທິງ ພິຈາລະນາຄຳສະເໜີຂອງຜູ້ດຳເນີນທຸລະກິດການນຳເຂົ້າ ແລະ ການສົ່ງອອກຍານພາຫະນະທາງບົກ;

7. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ພ້ອມດ້ວຍສະຖິຕິຈຳນວນຫົວໜ່ວຍທຸລະກິດ ແລະ ຈຳນວນຍານພາຫະນະທີ່ນຳເຂົ້າ ເພື່ອຈຳໜ່າຍ, ຈຳນວນການສົ່ງອອກ ແລະ ຈຳນວນທີ່ນຳເຂົ້າເພື່ອສົ່ງອອກຕໍ່ ໂດຍລາຍງານໃຫ້ຂັ້ນເທິງຊາບຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 4 ສິດ ແລະ ໜ້າທີ່ ຂອງກົມການຄ້າພາຍໃນ

ກົມການຄ້າພາຍໃນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ນິຕິກຳ ແລະ ມາດຕະການກ່ຽວກັບການຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງຫົວໜ່ວຍທຸລະກິດຈຳໜ່າຍຍານພາຫະນະທາງບົກ ເພື່ອນຳສະເໜີຂັ້ນເທິງ ພິຈາລະນາ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ນິຕິກຳ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງທຸລະກິດການຈຳໜ່າຍຍານພາຫະນະທາງບົກ ໃຫ້ພາກສ່ວນທີ່ກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ ຢູ່ສູນກາງ ແລະ ທ້ອງຖິ່ນ ຊາບຢ່າງທົ່ວເຖິງ;

3. ປະສານສົມທົບກັບຂະແໜງການກ່ຽວຂ້ອງຄົ້ນຄວ້າ ແລະ ນຳສະເໜີລັດຖະບານ ເພື່ອກຳນົດ ແລະ ດັດສົມຫົວໜ່ວຍທຸລະກິດຈຳໜ່າຍຍານພາຫະນະທາງບົກ ໃຫ້ເໝາະສົມຕາມສະພາບການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

4. ຊີ້ນຳ ແລະ ຕິດຕາມ ການເຄື່ອນໄຫວຂອງ ບັນດາສະມາຄົມອຸດສາຫະກຳຍານພາຫະນະທາງບົກ ໃຫ້ດຳເນີນໂດຍຖືກຕ້ອງສອດຄ່ອງ ຕາມລະບຽບກົດໝາຍ;

5. ຮັບ, ພິຈາລະນາແກ້ໄຂ ຫຼື ນຳສະເໜີຂັ້ນເທິງ ພິຈາລະນາຄຳສະເໜີຂອງຜູ້ດຳເນີນທຸລະກິດການຈຳໜ່າຍຍານພາຫະນະທາງບົກ;

6. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງທຸລະກິດການຈຳໜ່າຍຍານພາຫະນະທາງບົກ ພ້ອມດ້ວຍສະຖິຕິຈຳນວນຫົວໜ່ວຍທຸລະກິດດັ່ງກ່າວໃນຂອບເຂດທົ່ວປະເທດ ໂດຍລາຍງານໃຫ້ຂັ້ນເທິງຊາບ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 5 ສິດ ແລະ ໜ້າທີ່ ຂອງກົມອຸດສາຫະກຳ ແລະ ຫັດຖະກຳ**

ກົມອຸດສາຫະກຳ ແລະ ຫັດຖະກຳ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ນິຕິກຳ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງບັນດາຫົວໜ່ວຍທຸລະກິດໂຮງງານຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ນິຕິກຳ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງທຸລະກິດໂຮງງານຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ ໃຫ້ພາກສ່ວນທີ່ກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ ຢູ່ສູນກາງ ແລະ ທ້ອງຖິ່ນ ຊາບຢ່າງທົ່ວເຖິງ;

3. ພິຈາລະນາ ອອກ, ໂຈະ ຫຼື ຖອນໃບອະນຸຍາດສ້າງຕັ້ງໂຮງງານ, ໃບຢັ້ງຢືນດຳເນີນກິດຈະການໂຮງງານຜະລິດ ແລະ/ຫຼື-ປະກອບຍານພາຫະນະທາງບົກ ໃນຂອບເຂດທົ່ວປະເທດ;

4. ຢັ້ງຢືນແຜນການເຄື່ອນໄຫວປະຈຳປີຂອງໂຮງງານຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກ;

5. ຢັ້ງຢືນການຜະລິດຊິ້ນສ່ວນ ແລະ/ຫຼື ປະກອບຍານພາຫະນະທາງບົກໃນໂຮງງານ;

6. ຕິດຕາມ ແລະ ກວດກາ ມາດຕະຖານເຕັກນິກໂຮງງານ, ຂະບວນການຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກ ຢູ່ໂຮງງານ;

7. ຄຸ້ມຄອງການຜະລິດ ແລະ ປະກອບຍານພາຫະນະທາງບົກ ໃຫ້ໄດ້ມາດຕະຖານ ແລະ ມີຄວາມປອດໄພ;

8. ສົ່ງເສີມການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ ເຂົ້າໃນການຜະລິດ ແລະ ປະກອບຍານພາຫະນະທາງບົກ;

9. ເອື້ອອໍານວຍຄວາມສະດວກ ແລະ ຊຸກຍູ້ສົ່ງເສີມໃຫ້ ໂຮງງານຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກ ມີການເຄື່ອນໄຫວເປັນປົກກະຕິ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

10. ຮັບ, ພິຈາລະນາແກ້ໄຂ ຫຼື ນໍາສະເໜີຂັ້ນເທິງ ພິຈາລະນາຄໍາສະເໜີຂອງຜູ້ດໍາເນີນທຸລະກິດໂຮງງານຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກ;

11. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງທຸລະກິດໂຮງງານຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກ ພ້ອມດ້ວຍສະຖິຕິຈໍານວນຫົວໜ່ວຍທຸລະກິດໂຮງງານດັ່ງກ່າວໃນຂອບເຂດທົ່ວປະເທດ ໂດຍລາຍງານໃຫ້ຂັ້ນເທິງຊາບ ຢ່າງເປັນປົກກະຕິ;

12. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 6 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ແນະນໍາ ນະໂຍບາຍ, ນິຕິກໍາ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ໃຫ້ທັງພາກລັດ ແລະ ພາກທຸລະກິດ ຢູ່ແຂວງ, ນະຄອນຫຼວງ ຂອງຕົນໃຫ້ຮັບຊາບຢ່າງທົ່ວເຖິງ;

2. ພິຈາລະນາ ອອກ, ໂຈະ, ຖອນ ໃບອະນຸຍາດດໍາເນີນທຸລະກິດການນໍາເຂົ້າ ແລະ ສົ່ງອອກ ສໍາລັບຍານພາຫະນະທາງບົກ ປະເພດລົດສອງ ລໍ້ ແລະ ສາມ ລໍ້ (ຍົກເວັ້ນບໍລິສັດທີ່ໄດ້ຮັບໃບອະນຸຍາດຈາກກົມການນໍາເຂົ້າ ແລະ ສົ່ງອອກ), ໃບອະນຸຍາດດໍາເນີນທຸລະກິດ ການຈໍາໜ່າຍຍານພາຫະນະທາງບົກ ສໍາລັບພາຫະນະປະເພດ ສີ່ລໍ້ຂຶ້ນໄປ;

3. ພິຈາລະນາການຂໍອະນຸຍາດນໍາເຂົ້າ-ສົ່ງອອກ ຍານພາຫະນະທາງບົກ ປະເພດສອງ ຫຼື ສາມລໍ້ ແລະພາຫະນະຮັບໃຊ້ການຜະລິດທາງກົງ ທີ່ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ, ນະຄອນຫຼວງ ຮັບຮອງ ແລ້ວແຈ້ງໃຫ້ຂະແໜງການການເງິນຮັບຊາບ;

4. ຄຸ້ມຄອງ ແລະ ຕິດຕາມ ກວດກາ ດ້ານມາດຕະຖານເຕັກນິກໂຮງງານ, ການດໍາເນີນກິດຈະການໂຮງງານຜະລິດ ແລະ/ຫຼື ປະກອບຍານພາຫະນະທາງບົກ ທີ່ຕັ້ງຢູ່ພາຍໃນຂອບເຂດແຂວງ, ນະຄອນຫຼວງຂອງຕົນ;

5. ຄຸ້ມຄອງ ແລະ ຕິດຕາມການເຄື່ອນໄຫວຂອງທຸລະກິດຍານພາຫະນະທາງບົກທັງໝົດ ລວມທັງສາຂາທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ແຂວງ, ນະຄອນຫຼວງຂອງຕົນ ລວມທັງຫົວໜ່ວຍທຸລະກິດທີ່ອອກໃບອະນຸຍາດດໍາເນີນທຸລະກິດ ຢູ່ຂັ້ນສູນກາງ;

6. ຢັ້ງຢືນການລົງທະບຽນສ້າງຕັ້ງສາຂາຂອງທຸລະກິດຍານພາຫະນະທາງບົກ;

7. ປະສານສົມທົບກັບຂະແໜງການກ່ຽວຂ້ອງຄົ້ນຄວ້າ ແລະ ລາຍງານກະຊວງອຸດສາຫະກໍາ ແລະການຄ້າເພື່ອນໍາສະເໜີລັດຖະບານພິຈາລະນາກໍານົດ ແລະ ດັດສົມຫົວໜ່ວຍທຸລະກິດການນໍາເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ແລະ ຍານພາຫະນະຮັບໃຊ້ການຜະລິດກະສິກໍາ ໃຫ້ເໝາະສົມກັບສະພາບການພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ;

8. ຮັບ ແລະ ຄົ້ນຄວ້າພິຈາລະນາແກ້ໄຂ ຫຼື ສະເໜີຂັ້ນສູນກາງພິຈາລະນາຄໍາສະເໜີຂອງຜູ້ດໍາເນີນທຸລະກິດຍານພາຫະນະທາງບົກ ທີ່ຕົນອອກໃບອະນຸຍາດດໍາເນີນທຸລະກິດ;

9. ເອື້ອອໍານວຍຄວາມສະດວກ ແລະ ຊຸກຍູ້ ການດໍາເນີນທຸລະກິດຍານພາຫະນະທາງບົກ ພາຍໃນແຂວງ, ນະຄອນຫຼວງຂອງຕົນ ໃຫ້ເຄື່ອນໄຫວເປັນປົກກະຕິ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

10. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ພ້ອມດ້ວຍສະຖິຕິຈຳນວນຫົວໜ່ວຍທຸລະກິດທັງໝົດ ພາຍໃນແຂວງ, ນະຄອນຫຼວງ ຂອງຕົນ ໂດຍລາຍງານໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ປະຈຳໄຕມາດ ແລະ ປະຈຳປີ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 7 ສິດ ແລະ ໜ້າທີ່ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ**

ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາອອກ, ສັ່ງໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ການຈຳໜ່າຍຍານພາຫະນະທາງບົກ ປະເພດ ສອງ ລໍ້ ແລະ ສາມ ລໍ້;

2. ຕິດຕາມການດຳເນີນທຸລະກິດຍານພາຫະນະ, ການດຳເນີນກິດຈະການໂຮງງານຜະລິດ ແລະ/ຫຼື ປະກອບຍານພາຫະນະ ທີ່ມີທີ່ຕັ້ງຢູ່ ເມືອງ, ນະຄອນ ຂອງຕົນ ໃຫ້ເຄື່ອນໄຫວ ຖືກຕ້ອງສອດຄ່ອງກັບດຳລັດວ່າດ້ວຍການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ;

3. ຕິດຕາມ, ສັງລວມບັນຫາຂອງຫົວໜ່ວຍທຸລະກິດຍານພາຫະນະທາງບົກ ທີ່ຢູ່ ເມືອງ, ນະຄອນ ຂອງຕົນ ເພື່ອລາຍງານຕໍ່ຂັ້ນເທິງໃນການຊອກຫາວິທີທາງແກ້ໄຂໃຫ້ແທດເໝາະ ແລະ ສອດຄ່ອງ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 8 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ, ກົມການຄ້າພາຍໃນ, ກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວຽກງານການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ຕາມທີ່ໄດ້ກຳນົດໃນຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ ແລະ ຖືກຕ້ອງສອດຄ່ອງກັບດຳລັດວ່າດ້ວຍການຄຸ້ມຄອງທຸລະກິດຍານພາຫະນະທາງບົກ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ພ້ອມທັງໃຫ້ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

**ມາດຕາ 9 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ພິມລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ລັດຖະມົນຕີ**

ປອ.ຄຳແພງ ໄຊສົມແພງ